ຂັ້ນຕອນການຜະລິດລູກໝູລາດ

13

1 ແນວພັນໝູລາດ

ແນວພັນໝູລາດ: ຕີນໂຕສີດຳ, ໜ້າຜາກມີສີຂາວ ແລະ ມີນ້ຳໜັກ ລະຫວ່າງ 80 ຫາ 100 ກິໂລ.

ແນວພັນໝູມ້ຽງ: ມີສີດຳ ແລະ ຮູບຮ່າງໃຫຍ່ທີ່ມີນ້ຳຫນັກເຕັມທີ່ປະມານ 80 ຫາ 120 ກິໂລ.

ແນວພັນໝູຈີດ: ມີສີດຳ, ຮູບຮ່າງນ້ອຍ ມີນ້ຳຫນັກປະມານ 40-60 ກິໂລ.

ແນວພັນໝູມແດງ: ມີສີແດງ, ຫນ້າພາກສັ້ນ, ຮູບຮ່າງໃຫຍ່ ແລະ ມີນ້ຳຫນັກປະມານ 65-90 ກິໂລ.

2 ວິທີການຄັດເລືອກພໍ່ແມ່ພັນ

ຂັ້ນຕອນການຄັດເລືອກແບ່ງເປັນ 3 ໄລຍະຄື:

ໄລຍະທີ 1: ເລີ່ມແຕ່ມື້ເກີດຈົນຮອດຢ່ານົມ.

ໄລຍະທີ 2: ເລີ່ມແຕ່ອະນຸບານຈົນຮອດໄລຍະເລີ່ມເປັນຂ່າວສາວ.

ໄລຍະທີ 3: ແມ່ນໄລຍະເລີ່ມເປັນ ພໍ່ແມ່ພັນ; ສຳລັບໝູແມ່ພັນ ແມ່ນເລີ່ມຂຶ້ນເຜດ;ສຳລັບພໍ່ພັນຕ້ອງມີລຳຕົວໃຫຍ່, ສີສັນ ແລະ ໜັງສີດໃສ, ອະໄວຍະວະເພດຜູ້ແຂງແຮງດີ, ລູກອັນທະທັງສອງໜ່ວຍໃຫຍ່ສະເໝີກັນ, ໜ່ວຍຕາສີດຊື່ນແຈ່ມໃສ, ດັ້ງຊຸ່ມ, ລະບົບແຂ່ງຂາ ແລະ ເລັບຕີນແຂງແຮງດີ, ມີລັກສະນະກ້າວ ກົດເປັນເພດຜູ້ຢ່າງຊັດເຈນ.



ລັກສະນະໝູພໍ່ພັນທີດີ

ລັກສະນະໝູແມ່ພັນທີດີ

3 ການປະສົມພັນ

ການກວດກາເບິ່ງວ່າແມ່ພັນມີການປະສົມພັນຕິດແລ້ວ ຫຼື ບໍ່ ນັ້ນແມ່ນພວກເຮົາສາມາດນຳໃຊ້ເຕັກນິກທີ່ໝູແມ່ພັນຂຶ້ນເຜດ ຫຼື ເອີ້ນວ່າການເປັນລະດູຂອງແມ່ພັນຕາມທຳມະຊາດ ຊຶ່ງແມ່ພັນຈະເປັນລະດູໃນຮອບວຽນທຸກໆ 21 ວັນ ໂດຍອີງໃສ່ຂະບວນການທຳມະຊາດດັ່ງກ່າວນັ້ນ ເຮົາສາມາດຕິດຕາມເບິ່ງວ່າພາຍຫຼັງປະສົມພັນແລ້ວ ຄື ນັບແຕ່ມື້ປະສົມພັນໄປໄດ້ປະມານ 21 ວັນ ຖ້າບໍ່ເຫັນແມ່ພັນຂຶ້ນເຜດອີກກໍ່ສະແດງວ່າມັນມີການປະສົມພັນຕິດແລ້ວ.

ຕົວຢ່າງ: ມື້ປະສົມພັນ ວັນທີ 17 ເດືອນ 2 ປີ 2014

- ເຮົາເອົາ - 6 ລົບອອກຈາກວັນທີ 17 ໝາຍວ່າ: 17 – 6 = 11
- ເຮົາເອົາ + 4 ບວກເຂົ້າເດືອນ 2 ໝາຍວ່າ: 2 + 4 = 6
- ຈະໄດ້ມື້ເກີດລູກຂອງແມ່ພັນແມ່ນ: ວັນທີ 11 ເດືອນ 6 ປີ 2014

4 ອາຫານໝູ ແລະ ເຕັກນິກການໃຫ້ອາຫານ

4.1 ການຄຳນວນອາຫານໝູ

- ໝູນ້ອຍດູດນົມ ໃຊ້ເວລາລ້ຽງ 1 ເດືອນ ຕ້ອງການອາຫານ 1,3 ກິໂລຖາມ/ໂຕ/ວັນ.
- ໝູນ້ອຍຢ່ານົມ ຫຼື ໝູນ້ອຍອະນຸບານ ໃຊ້ເວລາລ້ຽງ 6 ອາທິດ ຕ້ອງການອາຫານ 26 ກິໂລຖາມ/ໂຕ/6 ອາທິດ.
- ໝູຂຸ້ນມີອັດຕາແລກປ່ຽນທາດອາຫານ 1:3 ໃຊ້ເວລາລ້ຽງ 13 ອາທິດ.
- ຕ້ອງການອາຫານ 240 ກິໂລຖາມ.
- ແມ່ພັນ 1 ໂຕຕ້ອງການອາຫານປະມານ 800 ກິໂລຖາມລ້ຽງໃນ 1 ປີ.
- ພໍ່ພັນ 1 ໂຕ ຕ້ອງການອາຫານປະມານ 900 ກິໂລຖາມ ລ້ຽງໃນ 1 ປີ.

4.2 ການໃຫ້ອາຫານໝູແມ່ລູກອ່ອນ

ກ່ອນແມ່ພັນຈະເກີດລູກປະມານ 1 ອາທິດໃຫ້ຫຼຸດອາຫານລົງຍັງເຫຼືອພຽງ 2 ກິໂລ/ໂຕ/ວັນ ທັງນີ້ເພື່ອໃຫ້ແມ່ພັນຢູ່ໃນສະພາບກຽມພ້ອມເກີດລູກ, ຖ້າກິນອີ່ມຫຼາຍຈະພາໃຫ້ແມ່ພັນເກີດລູກຍາກ; ໃນມື້ທີ່ປະກົດເຫັນແມ່ ພັນຈະເກີດລູກແລ້ວ ແລະ ໃນມື້ທີ່ເກີດລູກແມ່ນໃຫ້ຢຸດເກືອອາຫານ; ພາຍຫຼັງທີ່ເກີດລູກແລ້ວ ໃນມື້ທີ 1 ຫຼັງເກີດລູກໃຫ້ອາຫານພຽງແຕ່ 1 ກິໂລ/ໂຕ/ວັນ, ມື້ທີ 2 ຕໍ່ມາໃຫ້ເກືອ 2,5 ກິໂລ/ໂຕ/ວັນ, ມື້ທີ 3 ໃຫ້ເກືອ 3,5 ກິໂລ/ໂຕ/ວັນ, ມື້ທີ 4 ແລະ ມື້ຕໍ່ໄປໃຫ້ເກືອແມ່ພັນເຕັມອັດຕາປະມານ 4 ຫາ 5 ກິໂລ/ໂຕ/ວັນ ຈົນກວ່າຈະຮອດ ມື້ຢ່ານົມ. ລວມໄລຍະລ້ຽງລູກທັງໝົດປະມານ 4 ອາທິດ ຫຼື 30 ວັນ. ວິທີການໄລ່ລ່ຽງອາຫານໃຫ້ແມ່ພັນມີການ ຄິດໄລ່ດັ່ງນີ້:

ວິທີຄິດໄລ່:

- ໃນວັນໜຶ່ງແມ່ພັນຕ້ອງການອາຫານ 2 ກິໂລຖາມເພື່ອການມີຊີວິດຂອງມັນ.
- ລູກ 8 ໂຕ x 0,25 ກິໂລຖາມ ເພື່ອຜະລິດນ້ຳນົມໃຫ້ລູກ 8 ໂຕແມ່ນ 2 ກິໂລຖາມ.

ລວມອາຫານທີ່ຕ້ອງເກືອແຕ່ລະວັນແມ່ນ 2 + 2 = 4 ກິໂລຖາມ.

4.3 ອາຫານໝູທີ່ມີຢູ່ໃນທ້ອງຖິ່ນ

ໂດຍທົ່ວໄປ ອາຫານໝູທີ່ຫາໄດ້ໃນທ້ອງຖິ່ນຕ່າງໆຂອງລາວເຮົາຕົ້ນຕໍແມ່ນຮຳ, ສາລີ, ເຂົ້າປຽນ, ມັນຕົ້ນ ແລະ ພືດຜັກຕ່າງໆເຊັ່ນ: ໃບປໍສາ, ບອນ, ຫຍ້າເຮືອບິນ, ຜັກຫົມ. ສຳລັບຖົ່ວສະໄຕໂລແມ່ນຊາວກະສິກອນຈຳນວນໜຶ່ງກຳລັງລິເລີ່ມນຳໃຊ້.ອາຫານຕ່າງໆເຫຼົ່ານີ້ແມ່ນສາມາດຕອບສະໜອງທາງດ້ານພະລັງງານຢ່າງພຽງພໍໃຫ້ໝູ, ແຕ່ຈະຂາດທາດຊື້ນ, ແຮ່ທາດແລະ ວິຕະມິນ.

ຕົວຢ່າງ: ສູດອາຫານທີ່ຈະນຳໄປປັບປຸງດ້ານອາຫານໝູຂອງຊາວກະສິກອນເຂດພູດອຍບ້ານເປົ້າໝາຍຂອງໂຄງການ

ວັດຖຸດິບ

- ຮຳອ່ອນໂຮງສີຂະໜາດກາງ, ນ້ອຍ ມີທາດຊື້ນປະມານ 10%
- ສາລີ 9%
- ອາຫານເຂັ້ມຂຸ້ນ 29%
- ຖົ່ວສະໄຕໂລ 14%
- ຢວກກ້ວຍ 4%

ຕາຕະລາງທີ: ທາດອາຫານຂອງວັດຖຸດິບອາຫານສັດ

ລ/ດ	ວັດຖຸດິບອາຫານສັດ	ທາດຊື້ນ, %	ອັດຕາສ່ວນປະສົມສຸດທີ 1 (kg)	
			ກິໂລ	ທາດຊື້ນທີ່ໄດ້ຮັບ
1	ຮຳອ່ອນ(ໂຮງສີກາງ, ນ້ອຍ)	10	30	3
2	ສາລີ	9	15	1.35
3	ມັນຕົ້ນ	2,5	9	0.27
4	ອາຫານເຂັ້ມຂຸ້ນ	29	26	7.54
5	ຢວກກ້ວຍ	4	8	0.32
6	ຖົ່ວສະໄຕໂລ	14	12	1.68
	ລວມ		100	14.16

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la